ແຜນການສອນ

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 03 ສິງຫາ 2008 ( 08-03-2008 )

---

# ຊີວິດທີ່ມີໃຈຈົດຈໍ່:

**ຂໍ້ພຣະຄັມພີໃນບົດຮຽນ:** (ເຮັບເຣີ 1:1-6, 10-14; 2:1-4)

**ຄຳຖາມແຫ່ງຊີວິດ:** ເປັນດ້ວຍເຫດໃດຂ້າພະເຈົ້າຈຶ່ງມີໃຈທີ່ຈົດຈໍ່ຕໍ່ຊີວິດຂອງຕົນເອງຢູ່ທີ່ພຣະເຢຊູ?

**ຄວາມຈິງໃນພຣະຄັມພີ:** ເພາະວ່າອົງພຣະເຢຊູເປັນຜູ້ປະເສີດ, ແມ່ນອົງທີ່ພຣະເຈົ້າໄດ້ເປີດເຜີຍໃຫ້ຮູ້ຢ່າງຄົບຖ້ວນ, ດັ່ງນັ້ນ, ພວກເຮົາຈຶ່ງຈົດຈໍ່ຢູ່ທີ່ພຣະເຢຊູ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ທ່ານຄົ້ນຫາທາງທີ່ດີທີ່ສຸດຈາກພຣະເຈົ້າໃນຊີວິດປະຈຳວັນຂອງທ່ານໂດຍ:

- ການຊອກຫາຫົນທາງທີ່ຈົດຈໍ່ຢູ່ໃນພຣະເຢຊູ, ແລະ
- ໃຫ້ມີແຜນການໂດຍສະເພາະທີ່ທ່ານຕ້ອງທຳໃນການຈົດຈໍ່ຕໍ່ພຣະເຢຊູໃນຊີວິດ.

## ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "ແຜນການສອນ", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

## ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:**

- ຊີວິດທີ່ດີ: ການດຳເນີນຊີວິດທີ່ດີທີ່ສຸດຢູ່ໃນໂລກນີ້ແມ່ນທາງໃດ? ໃຫ້ຂຽນຂໍ້ຄວາມດັ່ງຕໍ່ໄປນີ້ໃສ່ກະດານ ແລ້ວໃຫ້ຕອບໄວໆ ໂດຍການຖາມເຂົາເຈົ້າໃຫ້ຄິດເຖິງເຣື່ອງການໂຄສະນາຢູ່ທີວີ, ປຶ້ມວາຣະສານ ແລະ ບັນຫາທີ່ໂຊໃຫ້ເຫັນໃນທີວີ ແລະໃນໜັງ . ແລ້ວຖາມວ່າ: ສິ່ງເຫລົ່ານີ້ໄດ້ມີຢູ່ໃນຊີວິດຄຣິສຕຽນທີ່ດີຄືແນວໃດ?

1. <u>ພຣະເຈົ້າໄດ້ຕັດກ່າວ:</u> (ເຮັບເຣີ 1:1-3)

- ຂໍໃຫ້ນັກຮຽນອາສາສມັກອ່ານ (ເຮັບເຣີ 1:1-3)
- ໃຫ້ນັກຮຽນຈັດກັນເປັນກຸ່ມນ້ອຍໆ 2-3 ກຸ່ມ ແລ້ວເອົາພຣະຄຳໃຫ້ຫລາຍໆ ຂໍ້ດັ່ງນີ້: ໂຢຮັນ 1:1; ໂຢຮັນ 1:18; ໂກໂລຊາຍ 3:16; ມັດທານ 11:27;; ມັດທາຍ 28:18; ຄາລາເຕັຽ 4:7; ໂຣມ 8:17; ໂກໂລຊາຍ 1:17; 1 ເປໂຕ 2:24; ໂກໂລຊາຍ 2:14; ໂຣມ 5:8; ກິຈການ 1:9-11; ໂຣມ 4:25. ໃຫ້ນັກຮຽນເຮັດໃຫ້ສຳເຮັດທີ່ " ພຣະເຢຊູຕັດກ່າວ...ແລະໃຫ້ສະແດງໃຫ້ເຫັນວ່າພຣະທັມເຮັບເຣີ 1:1-3 ໄດ້ກ່າວວ່າຢ່າງໃດ?
- ໃຫ້ນັກຮຽນກັບໄປເບິ່ງ ໂຢຮັນ 3:16 ແລ້ວອ່ານ ຫລື ເວົ້າພ້ອມໆ ກັນ. ຊີ້ງຊີ້ໃຫ້ເຫັນວ່າພຣະຄຳເຫລົ່ານີ້ໄດ້ບັນຈຸໝາກຫົວໃຈຂອງຂ່າວປະເສີດ. ຊີ້ງອະທິບາຍເຖິງການເຊື່ອໃນອົງພຣະເຢຊູຄຣິດກ່ອນ ແລະຕໍ່ມາຈຶ່ງເກີດມີໃຈຈົດຈໍ່ຊີວິດໃນພຣະເຢຊູໄດ້.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຣີ 1:1-3)

1. ພຣະເຈົ້າໄດ້ຊົງຕັດກ່າວຕໍ່ຄົນທັງຫລາຍກ່ອນທີ່ພຣະເຢຊູຄຣິດສະເດັດມາໃນໂລກນີ້ວ່າຢ່າງໃດ?
2. ແມ່ນຫຍັງແດ່ທີ່ຜູ້ປະກາດພຣະທັມໄດ້ເວົ້າເຣື່ອງພຣະເຈົ້າໃນສມັຍພຣະຄັມພີເດີມ?
3. ເປັນຫຍັງຈຶ່ງວ່າການຕິດຕໍ່ພົວພັນກັບພຣະເຢຊູ ດີກວ່າຜູ້ເປັນພຣະເຈົ້າ?
4. ຜູ້ຂຽນພຣະທັມເຮັບເຣີໄດ້ໃຊ້ຫຍັງໃນການບອກວ່າແມ່ນໃຜເປັນພຣະເຢຊູ?
5. ແມ່ນຫຍັງແດ່ທີ່ພຣະເຢຊູໄດ້ຊົງພົວພັນ ແລະພຣະອົງເປັນຫຍັງກັບພຣະເຈົ້າ?

2. <u>ພຣະເຢຊູເປັນອົງຍິ່ງໃຫຍ່:</u> (ເຮັບເຣີ 1:4-6, 10-14)

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະທັມ ເຮັບເຣີ 1:4-6, ອີກຜູ້ນຶ່ງອ່ານ ເຮັບເຣີ 1:10-14.
- ນຳພານັກຮຽນໄປເບິ່ງພຣະຄຳໃນບົດຮຽນ. ແລ້ວໃຫ້ສເນີປະເພດຕ່າງໆ ທີ່ມີຄວາມແຕກຕ່າງກັນຂອງຜູ້ຂຽນພຣະທັມເຮັບເຣີໄດ້ເອົາມາປຽບທຽບກັບພຣະຄຣິດ, ໂດຍການສະແດງຄວາມຍິ່ງໃຫຍ່ຂອງພຣະເຢຊູແຕ່ລະຄັ້ງ. ສະແດງໃຫ້ເຫັນໃນການຂຽນພຣະທັມເຮັບເຣີ ຜູ້ຂຽນຕ້ອງການໃຫ້ຜູ້ອ່ານຮູ້ຈັກວ່າພຣະເຢຊູຊົງເປັນອົງຍິ່ງໃຫຍ່.
- ພັລນາເຣື່ອງທີ່ພຣະເຢຊູຊົງຍິ່ງໃຫຍ່ກວ່າທູດສວັນ ໂດຍການໃຊ້ຂໍ້ຄວາມຈາກພຣະຄັມພີພັນທະສັນຍາເດີມມາອ້າງອີງໃນຂໍ້ຕ່າງໆ ໃນພຣະທັມເຮັບເຣີ. ໃຫ້ນັກຮຽນອາສາສມັກອ່ານ ພຣະທັມເພງສັຣເສີນ 2:7; 2 ຊາມູເອນ 7:14; ເພງສັຣເສີນ 97:7; ແລະ ເພງສັຣເສີນ 102:25-27.
- ໃຫ້ນັກຮຽນໃນຫ້ອງຊ່ອຍກັນຄົ້ນຄວ້າຫາສາເຫດທີ່ພຣະເຢຊູເປັນຜູ້ຍິ່ງໃຫຍ່ຂອງການນະມັສການ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຣີ 1:4-6, 10-14)

1. ບົດບາດຂອງທູດສວັນແມ່ນຫຍັງ?
2. ຄວາມສັມພັນຂອງທູດສວັນກັບພຣະເຢຊູນັ້ນແມ່ນຫຍັງ?
3. ແມ່ນຫຍັງທີ່ພຣະເຢຊູຊົງໄດ້ຮັບ?
4. ບົດບາດອັນໃດທີ່ທູດສວັນກະທຳສຳລັບວັນພຣະກຳເນີດຂອງພຣະເຢຊູ?
5. ແມ່ນໃຜເປັນນຶ່ງ, ໃຜຈະໄດ້ຮັບຄວາມລອດພົ້ນ? ຄວາມສັມພັນຂອງເຂົາກັບທູດສວັນນັ້ນແມ່ນຫຍັງ?
6. ຜູ້ຂຽນໄດ້ໃຫ້ຂໍ້ມູນຫຍັງໃນຂໍ້ທີ 11-12 ນັ້ນ? ແມ່ນຫຍັງຈະ "ສລາຍ" ຫລື "ຖືກປ່ຽນແປງ" ?

**3. ຜົນທີ່ໄດ້ຮັບເພາະບໍ່ເອົາໃຈໃສ່:** (ເຮັບເຣີ 2:1-4)

- ຂໍໃຫ້ອາສາສມັກອ່ານພຣະທັມ ເຮັບເຣີ 2:1-4
- ອະທິບາຍ " ຂໍ້ຄວາມທີ່ກ່າວຜ່ານທາງທູດສວັນທັງຫລາຍ " ໄດ້ໃຫ້ຂໍ້ມູນແຕກຕ່າງກັບການໃຫ້ກົດຣະບຽບແກ່ໂມເຊໃນປື້ມພຣະຄັມພີພັນທະສັນຍາເດີມ. ຂໍໃຫ້ຜູ້ນຶ່ງອາສາສມັກອ່ານພຣະທັມ ກິຈການ 7:53 ແລະ ຄາລາເຕັຽ 3:19.
- ໃຫ້ຂຽນຄຳວ່າ " **ເມີນເສີຍ** " ໃສ່ກະດານ, ແລ້ວໃຫ້ນັກຮຽນສົນທະນາກັນວ່າຄຳນີ້ມີຄວາມໝາຍຢ່າງໃດແດ່?
- ໃຫ້ຖາມນັກຮຽນວ່າຈະມີຫຍັງເກີດຂຶ້ນຖ້າເຂົາບໍ່ຕັດຫຍ້າຈັກເທື່ອ ຫລື ທົດນ້ຳເຄື່ອງປູກຂອງເຂົາ.
  ຖ້າເຂົາບໍ່ເຄີຍທຳຄວາມສະອາດເຮືອນຈັກເທື່ອ ຫລືສ້ອມແປງຈະມີຫຍັງເກີດຂຶ້ນ.
  ຈະມີຫຍັງເກີດຂຶ້ນຖ້າເຂົາເມີນເສີຍຕໍ່ການເອົາໃຈໃສ່ໃນການດູແລລູກຂອງເຂົາ ຫລືຕົວເຂົາເອງ.
- ຖາມວ່າ: ຖ້າຊີວິດຄຣິສຕຽນຫາກມີການເມີນເສີຍຕໍ່ຫລັກການທີ່ພຣະເຢຊູໃຫ້ນັ້ນຈະເປັນແນວໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (ເຮັບເຣີ 2:1-4)

1. ແມ່ນຫຍັງທີ່ໄດ້ເຕືອນຄົນທັງຫລາຍເຣື່ອງການກະທຳໃນພຣະທັມ ເຮັບເຣີ2:3?
2. ໃນພຣະທັມຕອນນີ້ໄດ້ບອກວ່າຄົນທັງຫລາຍຖືກຕັກເຕືອນໂດຍຜ່ານທາງຄຣິສຕຽນໃນປະຫວັດສາດໃຫ້ປັກຕາມອງເບິ່ງພຣະເຢຊູ ແລະໃຫ້ເຊື່ອວ່າພຣະອົງຊົງເປັນຜູ້ທີ່ພຣະອົງຊົງເປັນນັ້ນຢ່າງໃດ?
3. ຄົນໃນສມັຍນີ້ໄດ້ເມີນເສີຍຕໍ່ພຣະເຢຊູແນວໃດ?
4. ແມ່ນຫຍັງເປັນຕົ້ນເຫດໃນການເມີນເສີຍຕໍ່ພຣະເຢຊູ?
5. ຂັ້ນຕອນອັນໃດທີ່ຄຣິສຕຽນຄວນເອົາໃຈໃສ່ເພື່ອຫລີກເວັ້ນການເມີນເສີຍຕໍ່ພຣະເຢຊູ?

## ບົດຮຽນພຣະຄັມພີແຫ່ງຄວາມຈິງ

- ພຣະເຈົ້າໄດ້ຕັດກ່າວຫລາຍສິ່ງຫລາຍປະການ, ສຳເຣັດ, ແລະຄົບບໍຣິບູນໃນພຣະບຸດຂອງພຣະອົງ, ຄື ພຣະເຢຊູຄຣິດ.
- ພຣະເຢຊູ, ເປັນພຣະເຈົ້າທີ່ຍິ່ງໃຫຍ່ສູງສຸດທີ່ພຣະເຈົ້າໄດ້ສຳແດງໃຫ້ເຫັນ, ເປັນໃຫຍ່ກວ່າທູດສວັນ ແລະເປັນຜູ້ທີ່ພຣະເຈົ້າຊົງເປີດເຜີຍໃຫ້ເປັນຜູ້ຕາງໜ້າພຣະອົງ.
- ຜູ້ທີ່ເຊື່ອທັງຫລາຍ ໃຜທີ່ເມີນເສີຍຕໍ່ພຣະເຢຊູ ແລະຄຳສັ່ງສອນຂອງພຣະອົງທີ່ໃຫ້ປະຕິບັດຕາມ ຈະຕ້ອງໄດ້ປະເຊີນໜ້າກັບຜົນການກະທຳທີ່ຕາມມາຢ່າງແນ່ນອນ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )